ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ລໍ້າຍວ
NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283



# ສຳເລັດກອງປະຊຸມໃຫຍ່ ຄັ້ງທີ III ຂອງສະຫະພັນແມ່ຍິງຮາກຖານ ທຫລ




ກອງປະຊຸມໃຫຍ່ ຄັ້ງທີ III ຂອງສະຫະພັນແມ່ຍິງຮາກຖານ ທຫລ ໄດ້ສຳເລັດລົງດ້ວຍໝາກຜົນອັນຈົບງາມໃນຕອນເຊົ້າຂອງວັນທີ 16 ມີນາ 2020 ຢູ່ທີ່ສະໂມສອນສະຖາບັນການທະນາຄານ, ນະຄອນຫຼວງວຽງຈັນໂດຍການເປັນປະທານຂອງສະຫາຍນາງ ທິບພາວັນ ຈັນທະພາສຸກ ປະທານສະຫະພັນແມ່ຍິງຮາກຖານ ທຫລ ແລະ ການໃຫ້ກຽດເຂົ້າຮ່ວມຂອງສະຫາຍ ພຸດທະໄຊ ສີວິໄລ ກຳມະການປະຈຳພັກ ທຫລ, ຮອງຜູ້ວ່າການ ທຫລ ແລະ ສະຫາຍນາງ ໄກສອນ ໄຊຍະພອນ ຮອງປະທານສະຫະພັນແມ່ຍິງ ທຫລ ແລະ ຜູ້ຕາງໜ້າອົງການຈັດຕັ້ງມະຫາຊົນ ທຫລ ແລະ ຜູ້ແທນສົມບູນເຂົ້າຮ່ວມຢ່າງພ້ອມພຽງ.

ສະຫາຍນາງ ຄຳເພີຍ ວໍລະເດດ ຮອງປະທານສະຫະພັນແມ່ຍິງຮາກຖານ ທຫລ ໄດ້ຜ່ານຮ່າງບົດລາຍງານການເມືອງເຊິ່ງໄດ້ຕີລາຄາສະພາບການຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ຄັ້ງທີ II ຂອງສະຫະພັນແມ່ຍິງຮາກຖານ ທຫລ ແລະ ທິດທາງແຜນການໃນ 05 ປີ ຕໍ່ໜ້າ. ຊຶ່ງມາຮອດເດືອນກັນຍາ 2019 ມີພະນັກງານເພດຍິງທັງໝົດຈຳນວນ 800 ສະຫາຍ ໃນນີ້ ສະມາຊິກແມ່ຍິງກວມເອົາ 90% ຂອງພະນັກງານແມ່ຍິງທັງໝົດ (ສະເພາະ ທຫລ ມີພະນັກງານຍິງ 496 ສະຫາຍ ແລະ ເປັນສະມາຊິກແມ່ຍິງ ກວມ 99%) ແລະ ໃນເວລາຕໍ່ມາກອງປະຊຸມກໍ່ໄດ້ຜ່ານຮ່າງບົດສຳຫລວດນຳພາລວມຂອງຄະນະສະຫະພັນແມ່ຍິງຮາກຖານ ທຫລ ແລະ ຜ່ານການເຄື່ອນໄຫວວຽກງານໄລຍະ 5 ປີ ຜ່ານມາ ສະຫະພັນແມ່ຍິງຮາກຖານ ທຫລ ສາມາດປະຕິບັດໜ້າທີ່ຂອງຕົນໄດ້ເປັນຢ່າງດີສະແດງອອກໃນແຕ່ລະດ້ານເປັນຕົ້ນແມ່ນການຮັກສາຄວາມສາມັກຄີເປັນເອກະພາບພາຍໃນສະມາຊິກແມ່ຍິງ, ເສີມຂະຫຍາຍບົດຮຽນ ແລະ ຄວາມສາມາດຢ່າງມີຫົວຄິດປະດິດສ້າງໃນການຈັດຕັ້ງປະຕິດບັດແນວທາງຂອງພັກລັດ ກໍຄືລະບຽບການຂອງສະຫະພັນແມ່ຍິງທີ່ຂັ້ນເທິງວາງອອກ ມີຄວາມສຳເລັດເປັນກ້າວໆ. ນອກຈາກນີ້, ກອງປະຊຸມ ຍັງໄດ້ຮັບຟັງບົດລາຍງານການເງິນຂອງສະຫະພັນແມ່ຍິງຮາກຖານ ທຫລ.

ຫລັງຈາກນັ້ນ, ບັນດາຜູ້ແທນແມ່ຍິງໄດ້ພ້ອມກັນໃຊ້ສິດປະຊາທິປະໄຕຢ່າງເຕັມສ່ວນໃນການປ່ອນບັດເລືອກຕັ້ງເອົາຄະນະສະຫະພັນແມ່ຍິງຮາກຖານ ທຫລສະໄໝທີ III ຈຳນວນ 11 ສະຫາຍ ແລະ ກອງປະຊຸມຄັ້ງປະຖົມມະລຶກ ໄດ້ເລືອກເອົາ ສະຫາຍນາງ ໄພທູນ ກິ່ງແກ້ວ ເປັນປະທານ, ສະຫາຍນາງ ພູມມະລີ ສີຣິພົນເດດ ເປັນຮອງປະທານ, ສະຫາຍນາງ ພຸດດາວັນ ສີຣິສົມບັດ ເປັນປະທານກວດກາ.



ສະຫາຍ ພຸດທະໄຊ ສີວິໄລ ກຳມະການປະຈຳພັກ ໄດ້ຍ້ອງຍໍຊົມເຊີຍຕໍ່ຜົນງານການປະຕິບັດງານຂອງຄະນະສະຫະພັນແມ່ຍິງທະນາຄານ ທຫລ ຊຸດຜ່ານມາ ທີ່ຍາດໄດ້ຜົນງານຫລາຍດ້ານ ແລະ ຄຽງຄູ່ກັນນີ້ ຍັງໄດ້ຮຽກຮ້ອງໃຫ້ຄະນະຊຸດໃໝ່ຈະຕ້ອງໄດ້ສຸມໃສ່ປັບປຸງແກ້ໄຂໃຫ້ມີທິດທາງທີ່ຕັ້ງໜ້າຂຶ້ນກວ່າເກົ່າ ແລະ ຍັງເຊື່ອໝັ້ນວ່າຄະນະສະຫະພັນແມ່ຍິງທະນາຄານ ທຫລ ຊຸດໃໝ່ຈະສາມາດສືບຕໍ່ຊີ້ນຳ-ນຳພາສະມາຊິກແມ່ຍິງພາຍໃນທະນາຄານ ທຫລ ໃນການຈັດຕັ້ງປະຕິບັດໜ້າທີ່ການເມືອງຂອງຕົນຕາມມະຕິກອງປະຊຸມໃນຄັ້ງນີ້ໃຫ້ຍາດໄດ້ຜົນງານໃຫມ່ທີ່ຍິ່ງໃຫຍ່ກວ່າເກົ່າ.



#ຂ່າວໂດຍ: ນາງ ປາໄນ ພົມທະລາ

#ພາບໂດຍ: ນາງ ປາໄນ ພົມທະລາ ແລະ ນາງວັນປະເສີດ ສີມບູນຂັນ

# ແລກປ່ຽນເງິນຕາຊະຊາຍ ຜິດລະບຽບກົດໝາຍບ້ານເມືອງ